# ຈັນຍາບັນເພສັຊກອນລາວ

## I. ຄວາມເປັນມາ

ຈັນຍາບັນຂອງເພສັຊກອນລາວໄດ້ຖືກຮ່າງຂື້ນພ້ອມກັບການຮ່າງກົດໝາຍຢາຜະລິດຕະພັນການແພດສະບັບທຳອິດຂອງ ສປປລາວຄືໃນລະຫວ່າງຊຸມທ້າຍປີ 90 ໂດຍຊ່ງວຊານອົງການຊີດາແລະບັນດາຜູ້ຊ່ງວຊານລາວໂດຍມີວັດຖຸປະສົງເພື່ອເປັນມາດຕະຖານໃຫ້ແກ່ການເຄື່ອນໄຫວວິຊາຊີບເພສັຊກັມຢູ່ ສປປລາວ. ເປົ້າໝາຍຂອງການຮ່າງຫຼັກຈັນຍາບັນໃນເວລານັ້ນຄືພາຍຫຼັງທີ່ກົດໝາຍຢາແລະຜະລິດຕະພັນການແພດໄດ້ຖືກຮັບຮອງແລະປະກາດໃຊ້ເປັນທາງການແລ້ວຈະຕ້ອງໄດ້ມີການສ້າງຕັ້ງສະພາຄຸ້ມຄອງວິຊາຊີບເພສັຊກຳຂື້ນຫຼັງຈາກນັ້ນສະພາດັ່ງກ່າວຈະຕ້ອງໄດ້ຮັບຮອງເອົາຫຼັກຈັນຍາບັນທີ່ໄດ້ຮ່າງຂື້ນນີ້ຢ່າງເປັນທາງການ. ເມື່ອກົດໝາຍຢາແລະຜະລິດຕະພັນການແພດສະບັບທຳອິດໄດ້ຖືກຮັບຮອງໃນປີ 2000 ແຕ່ສະພາຄຸ້ມຄອງວິຊາຊີບພັດບໍ່ໄດ້ຮັບການສ້າງຕັ້ງຂື້ນ ດັ່ງນັ້ນຫຼັກຈັນຍາບັນຂອງເພສັຊກອນລາວຈຶ່ງບໍ່ໄດ້ຖືກຮັບຮອງຢ່າງເປັນທາງການຈົນມາຮອດປັດຈຸບັນ.

ອີງໃສ່ຄວາມຮຽກຮ້ອງຕອ້ງການຂອງວຽກງານການປັບປຸງຫຼັກສູດການສຶກສາໃໝ່ຂອງຄະນະເພສັຊສາດ ແລະເພື່ອເຮັດໃຫ້ນັກສຶກສາເພສັຊສາດທີ່ກຳລັງຈະສຳເລັດການສຶກສາແລະເຂົ້າສູ່ການປະກອບວິຊາຊີບທາງດ້ານເພສັຊກຳນັ້ນໄດ້ມີຈິດສຳນຶກແລະການປະພຶດທີ່ດີສອດຄອ່ງກັບວິຊາການທີ່ຮຽນມາພອ້ມກັນນັ້ນກໍເພື່ອເຮັດໃຫ້ວິຊາຄວາມຮູ້ທີ່ຕົນໄດ້ຮຽນມານັ້ນໄດ້ຖືກນຳໄປປະຕິບັດໃຫ້ເກີດຜົນປະໂຫຍດສູງສຸດໃຫ້ແກ່ສັງຄົມກໍຄົນເຈັບລວມທັງຕົນເອງ ດັ່ງນັ້ນ ຈັນຍາບັນເສັຊກອນລາວທີ່ໄດ້ຖືກຮ່າງຂື້ນ ຈຶ່ງໄດ້ຖືກນຳສິດສອນໃນພາກວິຊາເພສັຊສາດໃນຊຸມປີຕໍ່ມາ. ປັດຈຸບັນສະພາຄຸ້ມຄອງວິຊາຊີບເພສັຊກັມໄດ້ຮັບການສ້າງຕັ້ງຂື້ນຢ່າງເປັນທາງການໃນປີ 2023 ແລະສະມາຄົມເພສັຊກອນລາວກໍພວມຢູ່ໃນໄລຍະການສ້າງຕັ້ງ ແລະອີງໃສ່ຄວາມຮຽກຮ້ອງການຂອງວຽກງານຄຸ້ມຄອງວິຊາຊີບເພສັຊກັມ ດັ່ງນັ້ນ ຫຼັກຈັນຍາບັນເພສັຊກອນລາວຈຳເປັນຈະຕ້ອງໄດ້ຮັບການພິຈາລະນາແລະຖືກຮັບຮອງຢ່າງເປັນທາງການເພື່ອເຮັດໃຫ້ການເຄື່ອນ ໄຫວ ວິຊາຊີບໄດ້ຕາມມາດຕະຖານຂອງສາກົນແລະທັງເປັນການປົກປ້ອງສຸຂະພາບຂອງປະຊາຊົນລາວ.

ພາຍຫຼັງທີ່ຄະນະກຳມະການຄຸ້ມຄອງວິຊາຊີບເພສັຊກັມໄດ້ຮັບການສ້າງຕັ້ງຂື້ນຢູ່ສະພາວິຊາຊີບປິ່ນປົວໃນເດືອນ ກຸມພາປີ 2023, ຄະນະກຳມະການດັ່ງກ່າວກໍໄດ້ນຳເອົາຮ່າງຈັນາບັນຂອງເພສັຊກອນມາ

ຄົ້ນຄວ້າພິຈາລະນາແລະຮັບຮອງເປັນເອກະພາບໃນກອງປະຊຸມຄົບຄະນະຄັ້ງວັນທີ 21 ເດືອນທັນວາປີ 2023.

## II. ຫຼັກຈັນຍາບັນຂອງເພສັຊກອນລາວ

**ຈຸດປະສົງ:**

1. ເພື່ອເຮັດໃຫ້ຜູ້ປະກອບວິຊາຊີບເພສັຊກັມຢູ່ ສປປລາວ ມີຄຸນນະພາບແລະມາດຕະຖານສູງ ເປັນທີ່ເຄົາລົບແລະເຊື່ອຖືໄດ້ຈາກຜູ້ທີ່ໄດ້ຮັບການບໍລິການ
2. ເພື່ອສົ່ງເສີມແລະປົກປ້ອງວິຊາຊີບເພສັຊກັມໃຫ້ມີຄວາມກ້າວໜ້າ ທຽມທັນກັບວິຊາການແພດອື່ນໆ
3. ເພື່ອເປັນມາດຕະຖານໃຫ້ແກ່ຜູ້ປະກອບການວິຊາຊີບເພສັຊກັມໃນການປະຕິບັດໜ້າທີ່ຂອງຕົນ.

**ຫຼັກຈັນຍາບັນຂອງເພສັຊກອນລາວປະກອບດ້ວຍ 8 ໜ້າທີ່ດັ່ງນີ້:**

1) ໜ້າທີ່ທົ່ວໄປຂອງເພສັຊກອນ
2) ໜ້າທີ່ຕໍ່ຄົນເຈັບແລະວຽກງານສາທາລະນະສຸກ
3) ໜ້າທີ່ຕໍ່ສາທາລະນະ (ສັງຄົມ,ຊຸມຊົນ)
4) ໜ້າທີ່ຕໍ່ລະບຽບກົດໝາຍ
5) ໜ້າທີ່ຕໍ່ການເຄື່ອນໄຫວທຸລະກິດ, ການເງິນແລະອື່ນໆ
6) ໜ້າທີ່ຕໍ່ວິຊາຊີບ
7) ໜ້າທີ່ຕໍ່ຕົວແທນທາງວິຊາການ
8) ໜ້າທີ່ໃນການເຄື່ອນໄຫວທີ່ບໍ່ແມ່ນວິຊາຊີບ

## I. ໜ້າທີ່ທົ່ວໄປຂອງເພສັຊກອນໃນຫຼັກຈັນຍາທຳ.

ເພສັຊກອນຕອ້ງ:

1. ຖືສຸຂະພາບແລະຄວາມປອດໄພຂອງຄົນເຈັບເປັນໜ້າທີ່ທຳອິດຂອງຕົນແລະຮັບໃຊ້ຄົນເຈັບແຕ່ລະຄົນຈົນສຸດຄວາມສາມາດທາງດ້ານວິຊາສະເພາະຄືກັບແພດໝໍ (Health practitioner)
2. ເຄົາລົບແລະປະຕິບັດຢ່າງເຄັ່ງຄັດລະບຽບກົດໝາຍຂອງສປປລາວ
3. ປະຕິບັດຕົນເປັນແບບຢ່າງທາງດ້ານວິຊາສະເພາະແລະບຸຄະລິກລັກສະນະໃຫ້ສົມກັບບົດບາດແລະກຽດສັກສີຂອງວິຊາຊີບ.

## II. ໜ້າທີ່ຕໍ່ຄົນເຈັບແລະວຽກງານສາທາລະນະສຸກ

1. ເພສັຊກອນຕອ້ງຕອບສະໜອງໃນທັນທີທັນໃດຕໍ່ການຮອ້ງຂໍທີ່ມີເຫດຜົນ ໃນການຈ່າຍຢາໃຫ້ແກ່ຄົນເຈັບຜູ້ທີ່ມີຄວາມຕອ້ງການ. ບອ່ນທີ່ສະຖານະການຈຳເປັນຮີບດວ່ນທີ່ສຸດແຕ່ຍັງໜ້າທີ່ປະຕິບັດຕໍ່ຄົນເຈັບອື່ນຢູ່, ເພສັຊກອນຕອ້ງຍອມຮັບເອົາການຮຽກຮອ້ງນັ້ນໂດຍບໍ່ຄຳນຶງເຖິງເວລາຫຼືໄລຍະທາງຫຼືຄວາມສາມາດໃນການຕອບແທນ.
2. ໃນການຈ່າຍຢາໃຫ້ຄົນເຈັບ, ເພສັຊກອນຕອ້ງຮັບປະກັນວ່າຄົນເຈັບຜູ້ນັ້ນແມ່ນຮູ້ແລະເຂົ້າໃຈດີກ່ຽວກັບການໃຊ້ຢາດັ່ງກ່າວໃນນັ້ນລວມທັງປະລິມານນຳໃຊ້, ຂໍ້ຄວນລະວັງແລະວິທີນຳໃຊ້ດວ້ຍຕົນເອງ
3. ເວລາໃຫ້ຂ່າວສານແລະແນະນຳຄົນເຈັບກ່ຽວກັບຢາແລະດ້ານວິຊາການນັ້ນ ເພສັຊກອນຕອ້ງປະຕິບັດຢ່າງຊື່ສັດ, ຂາວສະອາດແລະຄົບຖວ້ນ, ຫຼີກເວັ້ນການອະທິບາຍຊວນເຊື່ອກ່ຽວກັບຮູບລັກສະນະ, ລາຄາຫຼືຄຸນຄ່າຜລິດຕະພັນຫຼືການບໍລິການ.
4. ໃນການຊວ່ຍເຫຼືອຄົນເຈັບນັ້ນເພສັຊກອນໂດຍປົກກະຕິແລ້ວຕອ້ງຫຼີກເວັ້ນການບົ່ງມະຕິພະຍາດ, ການປິ່ນປົວແລະມາດຕະການອື່ນທີ່ນອກຂີດຄວາມສາມາດທາງດ້ານວິຊາສະເພາະຂອງຕົນ. ເພສັຊກອນຄວນແນະນຳຄົນເຈັບໄປບອ່ນທີ່ມີທ່ານໝໍຫຼືວິຊາກາແພດທີ່ມີຄວາມເໝາະສົມເພື່ອແນະນຳແລະຊວ່ຍເຫຼືອ.

5. ເວລາຈ່າຍຢາຕາມໃບສັ່ງຢາຕ້ອງບໍ່ສັບປ່ຽນແທນຫຼືປ່ຽນແປງຈຳນວນລາຍການຫຼືສ່ວນປະກອບ ໂດຍບໍ່ໄດ້ຮັບຄຳເຫັນດີຈາກແພດຜູ້ຂຽນໃບສັ່ງຢາຍົກເວັ້ນກໍລະນີມີການຜິດພາດ.
6. ຈະຕ້ອງບໍ່ຈ່າຍຢາເສບຕິດຫຼືຢາທີ່ສາມາດເຮັດໃຫ້ເກີດການຕິດຢາຫຼືຮູບການເສບຕິດອື່ນໆ ຫາກຮູ້ວ່າຢານັ້ນແມ່ນຈະຖືກນຳໄປໃຊ້ເພື່ອຈຸດປະສົງໃດນຶ່ງເທົ່ານັ້ນ
7. ຈະຕ້ອງບໍ່ຈ່າຍຢາໃຫ້ບຸກຄົນໃດກໍຕາມ ເມື່ອຮູ້ວ່າຢາດັ່ງແມ່ນສົ່ງໄປໃຫ້ແຫຼ່ງທີ່ຜິດກົດໝາຍ ຫຼືເພື່ອການຊົມໃຊ້ທີ່ບໍ່ຖືກຕ້ອງ.
8. ເພສັຊກອນຈະຕ້ອງບໍ່ພົວພັນກັບຢາປອມ, ຢາເຖື່ອນແລະຢາບໍ່ໄດ້ມາດຕະຖານ.
9. ເພສັຊກອນຈະຕ້ອງເພີ່ມພູນຄວາມຮູ້ແລະຄວາມກ້າວໜ້າທາງດ້ານເພສັຊສາດ ເພື່ອເຮັດໃຫ້ຂີດຄວາມສາມາດວິຊາຊີບທີ່ຕິດພັນກັບວຽກງານຂອງຕົນມີມາດຕະຖານສູງຂຶ້ນ, ເພສັຊກອນຕ້ອງນຳໃຊ້ແລະເຮັດໃຫ້ມີຄວາມຮູ້ແລະເຂົ້າໃຈໃນວິຊາການທັງຕໍ່ຄົນເຈັບ, ນາຍແພດ , ສັດຕະວະແພດແລະວິຊາການແພດອື່ນໆເທົ່າທີ່ສາມາດເພື່ອການຕັດສິນທາງວິຊາການທີ່ດີທີ່ສຸດ.
10. ຄວາມຈິງທີ່ຮູ້ເຫັນໂດຍເພສັຊກອນໃນໄລຍະເວລາເຄື່ອນໄຫວວິຊາຊີບແລຕິດພັນກັບສະພາບຂອງບຸກຄົນ, ສະພາບສຸຂະພາບຫຼືການປິ່ນປົວຂອງບຸກຄົນໃດນຶ່ງຈະຕ້ອງຖືເປັນຄວາມລັບແລະຈະຕ້ອງບໍ່ສົ່ງຂ່າວໃຫ້ບຸກຄົນທີ່ສາມນອກຈາກວິຊາສະເພາະການແພດທີ່ພວມປະຕິບັດໜ້າທີ່ໃຫ້ການປິ່ນປົວບຸກຄົນດັ່ງກ່າວຍົກເວັ້ນກໍລະນີກົດໝາຍມີຄວາມຕ້ອງການຫຼືຍອັນໄດ້ຮັບອະນຸຍາດຈາກຜູ້ກ່ຽວຫຼືຜູ້ດູແລຜູ້ກ່ຽວ.
11. ທຸກຄຳອະທິບາຍທີ່ເຮັດຂຶ້ນຫຼືການຢັ້ງຢືນໂດຍອີງໃສ່ວິຊາຊີບທີ່ອອກໃຫ້ໂດຍເພສັຊກອນນັ້ນຈະຕ້ອງເປັນຄວາມຈິງ, ຄົບຖ້ວນ, ແຈ້ງຂາວແລະຖືກກັບຈຸດມຸ່ງໝາຍ.

## III. **ໜ້າທີ່ຕໍ່ສາທາລະນະ (ຊຸມຊົນ, ສັງຄົມ)**

1. ເພສັຊກອນຈະຕ້ອງໃຫ້ການສະໜັບສະໜູນແລະມຸ່ງໝັ້ນໃນບັນດາກິດຈະກຳສາທາລະນະທີ່ມີຄວາມສຳຄັນຕໍ່ສຸຂະພາບຂອງຊຸມຊົນຊຶ່ງລວມທັງການເຜີຍແຜ່ໂດຍຜ່ານສື່ມວນຊົນຫຼືສື່ໂຄສະນາ, ບັນດາກິດຈະກຳດັ່ງກ່າວຈະຕ້ອງໃນເວລາດຽວກັນບໍ່ຮັບໃຊ້ການໂຄສະນາເພື່ອຜົນປະໂຫຍດສ່ວນບຸກຄົນ.

2. ເພສັຊກອນຈະຕ້ອງຮ່ວມມືກັບບັນດາອົງການຈັດຕັ້ງທີ່ມີຈຸດປະສົງເພື່ອສຸຂະພາບທີ່ດີຂອງມວນຊົນ, ເພື່ອຄວາມກ້າວໜ້າໃນການສະໜອງຢາແລະການໃຊ້ຢາທີ່ສົມເຫດສົມຜົນແລະຕ້ອງປະກອບສ່ວນທັງເວລາແລະທຶນຮອນເພື່ອສະໜັບສະໜູນວຽກງານຂອງອົງການດັ່ງກ່າວ.
3. ເພສັຊກອນຈະຕ້ອງບໍ່ສະໜັບສະໜູນຫຼືເຂົ້າຮ່ວມການເຄື່ອນໄຫວວິຊາຊີບທີ່ຫຼອກລວງ, ງົມງວາຍແລະບໍ່ມີວິທະຍາສາດເຂົ້າໃນການຮັກສາສຸຂະພາບ.
4. ເມື່ອປະເຊີນກັບສະຖານະການໃດນຶ່ງໃນນັ້ນພັດມີຄວາມຕ້ອງການທາງດ້ານການແພດຫຼືວິຊາຊີບການແພດອັນຮີບດ່ວນຊຶ່ງບໍ່ສາມາດຊອກຫາໄດ້ໃນເວລານັ້ນ, ເພສັຊກອນຈະຕ້ອງໃຫ້ການຊ່ວຍເຫຼືອເທົ່າທີ່ຄວາມຮູ້ແລະປະສົບປະການທີ່ຕົນມີ.

## IV. ໜ້າທີ່ຕໍ່ກົດໝາຍ

1. ເພສັຊກອນຈະຕ້ອງຮັບໃຊ້ວິຊາຊີບຢ່າງຖືກຕ້ອງຕາມເນື້ອໃນແລະຈິດໃຈຂອງກົດໝາຍທີ່ມີຕໍ່ການປະຕິບັດເພສັຊກັມ.
2. ທັງຢູ່ໃນວິຊາຊີບຂອງຕົນເອງແລະຊີວິດສ່ວນຕົວ, ເພສັຊກອນຈະຕ້ອງປະຕິບັດຕົນເອງໃຫ້ຖືກຕ້ອງກັບກົດໝາຍພົນລະເມືອງ, ກົດໝາຍທຸລະກິດແລະກົດໝາຍອາຍາ.
3. ຫຼັກຖານພິຍານທາງວິຊາການທີ່ອອກໃຫ້ໂດຍເພສັຊກອນແກ່ສານແຫ່ງໃດນຶ່ງນັ້ນຈະຕ້ອງມອບໃຫ້ຢ່າງຄົບຖ້ວນແລະຍຸດຕິທໍາແລະຖືກກັບມາດຕະຖານທີ່ດີທີ່ສຸດຂອງວິຊາຊີບແລະຄວາມຮູ້.

## V. ໜ້າທີ່ໃນການເຄື່ອນໄຫວທຸລະກິດ, ການເງິນແລະອື່ນໆ

1. ຍ້ອນລັກສະນະສະເພາະຂອງວິຊາຊີບ ເພສັຊກອນຈະໄດ້ມີການພົວພັນກັບທຸລະກິດແລະການຄ້າທີ່ກ່ຽວກັບການຜະລິດ, ການສະໜອງແລະການເປີດຮ້ານຂາຍຢາ, ຜົນປະໂຫຍດທາງດ້ານການເງິນແລະການຄ້ານັ້ນຈະຕ້ອງບໍ່ເຮັດໃຫ້ເກີດຄວາມເສັຍຫາຍຕໍ່ການປະຕິບັດໜ້າທີ່ທາງວິຊາຊີບທີ່ມີຕໍ່ຄົນເຈັບແລະຊຸມຊົນ.

2. ເພສັຊກອນຈະຕອ້ງບໍ່ຕົກລົງຮັບເອົາເງື່ອນໄຂຫຼືຂໍ້ບັງຄັບອັນໃດທີ່ຈຳກັດຄວາມເປັນອິດສະລະຂອງວິຊາສະເພາະຫຼືຄວາມສາມາດຊຶ່ງຈະນຳໄປສູ່ການທຳລາຍຄຸນນະພາບຂອງການຮັບໃຊ້ວິຊາສະເພາະຫຼືຊຶ່ງຮຽກຮອ້ງໃຫ້ມີການກະທຳທີ່ຂາດຈັນຍາທຳຫຼືວາງເງື່ອນໄຂບັງຄັບໃຫ້ແກ່ເພສັຊກອນອື່ນ.

3. ບອ່ນທີ່ສ້າງຄ່າທຳນຽມສຳລັບການບໍລິການວິຊາຊີບນັ້ນຄ່າທຳນຽມນັ້ນຕອ້ງຂາວສະອາດແລະສອດຄອ່ງກັບການບໍລິການທີ່ໃຫ້ແລະການໃຊ້ຈ່າຍທີ່ມີ.

4. ເພສັຊກອນຈະຖືກຮັບຮູ້ໂດຍຜ່ານຄຸນນະພາບຂອງການບໍລິການທີ່ມີຕໍ່ຊຸມຊົນ. ບໍ່ໃຫ້ເພສັຊກອນແລະເພສັຊກອນຊວ່ຍຜູ້ໃດໂຄສະນາການບໍລິການຂອງຕົນຈະແມ່ນໃນຮູບລັກສະນະລວມຫຼືໃນຮູບຜະລິດຕະພັນສະເພາະຫຼືການບໍລິການທີ່ມີ.

5. ຫ້ອງທີ່ໃຊ້ສຳລັບດຳເນີນຮ້ານຂາຍຢາຈະຕອ້ງແຕກຕ່າງແລະແຍກອອກຈາກຫ້ອງທີ່ນຳໃຊ້ເພື່ອເປົ້າໝາຍອື່ນ. ຫ້ອງດັ່ງກ່າວຈະຕອ້ງປະກອບດວ້ຍອຸປະກອນແລະຢູ່ໃນສະພາບທີ່ສະແດງອອກເຖິງການໃຫ້ການບໍລິການດ້ານວິຊາຊີບ, ສຳລັບອຸປະກອນຮັບໃຊ້ຈະຕອ້ງສະແດງອອກຢ່າງສົມສວ່ນລະຫວ່າງການໃຫ້ຂ່າວສານແລະມາດຕະການສຶກສາທີ່ບໍ່ແມ່ນທຸລະກິດກັບການແນະນຳຜະລິດຕະພັນສະເພາະຫຼືສິນຄ້າ, ທຸລະກິດຫຼືການເຄື່ອນໄຫວຢ່າງອື່ນທີ່ບໍ່ສອດຄອ່ງກັບການປະຕິບັດວິຊາຊີບຈະຕອ້ງບໍ່ຖືກນຳເຂົ້າມາໃນຮ້ານຂາຍຢາ.

6. ເພສັຊກອນທີ່ຮັບຜິດຊອບການຜະລິດ, ການນຳເຂົ້າ, ການສົ່ງອອກແລະການຂາຍຍົກຢາຕອ້ງເຄົາລົບຫຼັກຈັນຍາທຳຂອງວິຊາຊີບກໍຄືທຸກລະບຽບການຕ່າງໆທີ່ໄດ້ກຳນົດອອກເພື່ອຜົນປະໂຫຍດຂອງວຽກງານສາທາລະນະສຸກ.

7. ເພສັຊກອນທີ່ຮັບຜິດຊອບແລະເພສັຊກອນທີ່ຢູ່ພາຍໃຕ້ການຄຸ້ມຄອງ ຈະຕອ້ງບໍ່ດູໝິ່ນຫຼືໃສ່ຮ້າຍປ້າຍສີຕໍ່ເພື່ອນຮວ່ມວິຊາຊີບຫຼືໂຮງງານຫຼືບໍລິສັດທີ່ມີການແຂ່ງຂັນກັບຕົນ. ເພສັຊກອນທີ່ຮັບຜິດຊອບຕອ້ງຕິດຕາມຢ່າງໃກ້ສິດຄວາມຊັດເຈນຂອງຂ່າວສານທາງດ້ານວິທະຍາສາດ, ການແພດແລະເພສັຊກັມແລະການໂຄສະນາລວມທັງຄວາມໜ້າເຊື່ອຖືຂອງການນຳໃຊ້. ເພສັຊກອນຕອ້ງຮັບປະກັນວ່າການໂຄສະນາທີ່ເຮັດກ່ຽວກັບຢານັ້ນແມ່ນເປັນຄວາມຈິງຖືກກັບວັດຖຸປະສົງແລະບໍ່ມີລັກສະນະຫຼອກລວງ.

## VI. ໜ້າທີ່ຕໍ່ວິຊາຊີບ

1. ເພສັຊກອນມີໜ້າທີ່ໃນການເຊີດຊູກຽດສັກສີຂອງວິຊາຊີບແລະຍຶດຖືຫຼັກຈັນຍາທຳຂອງວິຊາຊີບ, ເພສັຊກອນແລະເພສັຊກອນຊວ່ຍຈະຕອ້ງບໍ່ເຂົ້າຮວ່ມທຸກການເຄື່ອນໄຫວທີ່ຈະນຳໄປສູ່ເຮັດໃຫ້ເສື່ອມເສັຍກຽດສັກສີຂອງວິຊາຊີບຫຼືບໍ່ສ້າງສິ່ງທີ່ເປັນອັນຕະລາຍຕໍ່ວິຊາຊີບຫຼືຕໍ່ວິຊາການແພດອື່ນໆ
2. ການພົວພັນວິຊາຊີບລະຫວ່າງເພສັຊກອນຕອ້ງບົນພື້ນຖານກຽດສັກສີ, ຄວາມຈິງໃຈ, ແລະເຊື່ອໝັ້ນ. ເພສັຊກອນແລະເພສັຊກອນຊວ່ຍຈະຕອ້ງບໍຊອກທຳລາຍຊື່ສຽງຂອງຜູ້ອື່ນຫຼືເຂົ້າຮວ່ມໃນການເຄື່ອນໄຫວທີ່ນຳມາຊຶ່ງຄວາມອັບປະໂຫຍດຕໍ່ຊີວິດແລະການປະຕິບັດວິຊາຊີບຂອງຜູ້ອື່ນ.
3. ເພສັຊກອນຈະຕອ້ງເປີດເຜີຍໂດຍປັດສະຈາກການຫວັ່ນເກງຫຼືໂຍະຍານຕໍ່ການກະທຳທີ່ບໍ່ຖືກກົດໝາຍຫຼືຜິດຈັນຍາທຳໃນວິຊາຊີບ.
4. ເພສັຊກອນຕອ້ງບໍ່ມຸ້ງໝັ້ນໃນສິ່ງທີ່ບໍ່ເໝາະສົມຫຼືການປະພຶດຕ້ານສັງຄົມຈະແມ່ນໃນຫຼືນອກຄວາມຮັບຜິດຊອບກໍຕາມຊຶ່ງສາມາດຖືໄດ້ວ່າເປັນສິ່ງບໍ່ດີຕໍ່ກຽດສັກສີແລະຄວາມເຊື່ອຖືຂອງບຸກຄົນແລະຂອງວິຊາຊີບ, ໂດຍສະເພາະຈະຕອ້ງຫຼີກເວັ້ນການຊົມໃຊ້ເກີນຂອບເຂດສິ່ງມຶນເມົາແລະເສບຕິດ.

## VII. ໜ້າທີ່ຕໍ່ຕົວແທນວິຊາການ

1. ມີຕົວເພສັຊກອນຊວ່ຍເທົ່ານັ້ນຫຼືພະນັກງານທີ່ມີຄຸນສົມບັດຫຼືມີປະສົບປະການແລະມີວຸດທິການສຶກສາແລະປະສົບປະການທີ່ເທົ່າທຽມກັນແລະຖືກຕອ້ງກັບມາດຕະຖານທີ່ໄດ້ກຳນົດຢູ່ໃນກົດໝາຍຂອງສປປລາວຈຶ່ງສາມາດແທນໜ້າທີ່ວິຊສະເພາະຂອງເພສັຊກອນໃນນີ້ລວມທັງການປຸງແຕ່ງຫຼືການຈ່າຍຢາ.
2. ເພສັຊກອນຕອ້ງກວດກາຕິດຕາມຢູ່ທຸກເວລາພະນັກງານທີ່ຕົນໄດ້ມອບຄວາມຮັບຜິດຊອບໃຫ້, ມີຄວາມຮັບຜິຊອບຕໍ່ການປະຕິບັດໜ້າທີ່ຂອງຕົວແທນແລະຕໍ່ຄວາມບົກຜອ່ງຕົວແທນຂອງຕົນ.

## VIII. **ໜ້າທີ່ເວລາເຄື່ອນໄຫວທີ່ບໍ່ແມ່ນວິຊາສະເພາະ**

1. ເມື່ອເຂົ້າຮ່ວມການເຄື່ອນໄຫວທຸລະກິດ, ສັງຄົມ, ອາສະມັກແລະອື່ນໆທີ່ບໍ່ແມ່ນສ່ວນນຶ່ງຂອງວິຊາຊີບເພສັຊກຳນັ້ນ ເພສັຊກອນແລະເພສັຊກອນຊວ່ຍຈະຕອ້ງເຮັດຕາມຄວາມສາມາດຂອງຕົນແລະຈະຕອ້ງບໍ່ຮຽກຮອ້ງສິດທິດວ້ຍຖອ້ຍຄຳຫຼືການສໍ່ສະແດງເປັນຜູ້ເຄື່ອນໄຫວວິຊາຊີບ.
2. ເພສັຊກອນທີ່ບໍ່ເຄື່ອນໄຫວວິຊາຊີບຈະບໍ່ມີສະດຮຽກຮອ້ງເປັນຖອ້ຍຄຳຫຼືການສໍ່ສະແດງອອກເປັນຜູ້ເຄື່ອນໄຫວທີ່ມີຄວາມສາມາດໃນວິຊາຊີບ.